

# SuPER WE Coffee

## ວຽກເດັ່ນຂອງ ໂຄງການປີ 2023

**ມີນາ:** ກອງປະຊຸມ ທົບທວນແຜນງານ ແລະ ຮຽນຮູ້ກ່ຽວກັບການ ສົ່ງເສີມ ການມີສ່ວນຮ່ວມ ຂອງຜູ້ທີ່ມີຄວາມບົກພ່ອງທາງຮ່າງກາຍ, ການແຂ່ງຂັນກາເຟໝາກຊ້ອມລາວ ປະຈຳປີ 2023, ງານບຸນຊ່ວງເຮືອແພ ແລະ ງານບຸນເຮືອນບັນດາເຜົ່າ ປະຈຳປີ 2023

**ເມສາ:** ກອງປະຊຸມເຜີຍແຜ່ນະໂຍບາຍການປົກປ້ອງການລວນລາມ ທາງເພດ, ການຫາຜົນປະໂຫຍດທາງເພດ ແລະ ການລ່ວງ ລະເມີດສິດທິເດັກ, ກອງປະຊຸມ ປະມູນກາເຟປະຈຳປີ 2023 ຂອງກຸ່ມຜະລິດ ກາເຟພູດອຍ ດາກຈຶງ

**ພຶດສະພາ:** ກອງປະຊຸມ ການສ້າງຄວາມເຂັ້ມແຂງໃຫ້ແກ່ ແມ່ຍິງໃນວຽກ ງານການປູກກາເຟ ແລະ ວຽກການຕະຫຼາດ

## ຜູ້ທີ່ໄດ້ຮັບຜົນປະໂຫຍດ
**ມີນາ - ພຶດສະພາ 2023**

ຊາວສວນກາເຟ
**243**

ແມ່ຍິງຊົນເຜົ່າ
**158**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານ ການສະໜັບສະໜູນສ້າງຕັ້ງສູນແປຮູບກາເຟ, ສະໜອງເຕັກນິກ ການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມືວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ




switchasia GRANTS PROGRAMME · Haliéus · 4FORM · coop International Cooperative Alliance Asia and Pacific · ITC International Training Centre · FAIRTRADE ITALIA



ມີນາ

## ກອງປະຊຸມ ທົບທວນແຜນງານ ແລະ ຮຽນຮູ້ກ່ຽວກັບການສົ່ງເສີມ ການມີສ່ວນຮ່ວມຂອງຜູ້ທີ່ມີຄວາມບົກພ່ອງທາງຮ່າງກາຍ



ໃນວັນທີ 15 - 16 ມີນາ 2023, ທີມງານໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໄດ້ເຂົ້າຮ່ວມກອງປະຊຸມທົບທວນແຜນງານ ແລະ ຮຽນຮູ້ການສົ່ງເສີມ ການມີສ່ວນຮ່ວມຂອງ ຜູ້ທີ່ມີຄວາມບົກພ່ອງທາງຮ່າງກາຍ. ຈຸດປະສົງກໍແມ່ນເພື່ອ ແນ່ໃສ່ຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນງານໄລຍະຍາວ ແລະ ແບ່ງປັນບົດຮຽນທີ່ໄດ້ຈາກໂຄງການ ແລະ ການດໍາເນີນງານ. ນອກນັ້ນ, ຍັງມີຜູ້ຕາງໜ້າຈາກສູນບໍລິການເພື່ອການພັດທະນາແບບມີສ່ວນຮ່ວມຂອງຄົນພິການ ທີ່ໄດ້ຖືກເຊີນໃຫ້ມາສ້າງຂີດຄວາມສາມາດພາຍໃນອົງການແຄຣ໌ ກ່ຽວກັບວຽກງານ ຄວາມບົກພ່ອງທາງຮ່າງກາຍ ເພື່ອນໍາເອົາວຽກງານດັ່ງກ່າວເຂົ້າໃນໂຄງການແຄຣ໌ ໃນອະນາຄົດ.



ມີນາ

## ການແຂ່ງຂັນກາເຟໝາກຊ້ອມລາວ ປະຈໍາປີ 2023



ໃນວັນທີ 25 ມີນາ 2023, ທີມງານໂຄງການ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍ ຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ  ແລະ ເປັນມິດກັບສິ່ງແວດລ້ອມ ແລະ ຕົວແທນກຸ່ມຜະລິດກາເຟພູດອຍດາກຈຶງ ໄດ້ເຂົ້າຮ່ວມງານປະກາດຜົນການແຂ່ງຂັນກາເຟໝາກຊ້ອມລາວ ປະຈໍາປີ 2023. ເຊິ່ງໄດ້ນໍາສົ່ງ ຕົວຢ່າງກາເຟໝາກຊ້ອມສາຍພັນອາຣາບີກ້າ 5 ຕົວຢ່າງ ເຂົ້າແຂ່ງຂັນ 2 ປະເພດຄື: ຂະບວນການແປຮູບແບບລ້າງ ແລະ ແບບນໍ້າເຜິ້ງ, ເຊິ່ງຜົນການແຂ່ງຂັນ ຕົວຢ່າງກາເຟບ້ານຄູນໄຊ ໄດ້ຮັບລາງວັນທີ 2 ດ້ວຍຄະແນນ 83,92 ຈາກຂະບວນ ການແປຮູບກາເຟແບບລ້າງ ແລະ ຕົວຢ່າງກາເຟບ້ານດາກເດັນ ໄດ້ອັນດັບ 3 ຈາກຂະບວນການແປຮູບກາເຟແບບນໍ້າເຜິ້ງ ດ້ວຍຄະແນນ 84,47. ກາເຟທີ່ໄດ້ຄະແນນສູງກວ່າ 80 ແມ່ນສາມາດມີຄຸນນະສົມບັດເປັນກາເຟພິເສດໄດ້.

switchasia GRANTS PROGRAMME
Haliéus COOPERATIVES FOR DEVELOPMENT
4FORM
International Cooperative Alliance Asia and Pacific
ITC International Training Centre
FAIRTRADE ITALIA



## ມີນາ

### ງານບຸນຊ່ວງເຮືອແພ ແລະ ງານບຸນເຮືອນບັນດາເຜົ່າ ປະຈຳປີ 2023



ໃນລະຫວ່າງວັນທີ 29 - 30 ມີນາ 2023, ທີມງານໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງ ຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ແລະ ຕົວແທນກຸ່ມຊາວສວນກາເຟ ພູດອຍດາກຈຶງ ເຂົ້າຮ່ວມງານບຸນຊ່ວງເຮືອແພ ແລະ ງານບຸນເຮືອນບັນດາເຜົ່າ, ທີ່ເມືອງ ດາກຈຶງ, ແຂວງ ເຊກອງ. ເຊິ່ງມີຫຼາຍກວ່າ 100 ຄົນທີ່ເຂົ້າມາຢ້ຽມຊົມບູດຂອງໂຄງການ ເພື່ອຊີມລົດຊາດຂອງກາເຟ ແລະ ໂຄງການຍັງສາມາດຂາຍຜະລິດຕະພັນກາເຟໄດ້ເຖິງ 16 ຖົງ. ນີ້ເປັນໂອກາດດີ ສຳລັບຊາວສວນກາເຟທີ່ຈະເຮັດໃຫ້ກາເຟຂອງພວກເຂົາເປັນທີ່ຮູ້ຈັກຫຼາຍຂື້ນ.



## ເມສາ

### ກອງປະຊຸມເຜີຍແຜ່ນະໂຍບາຍການປົກປ້ອງການລວນລາມທາງເພດ, ການຫາຜົນປະໂຫຍດທາງເພດ ແລະ ການລ່ວງລະເມີດສິດທິເດັກ



ໃນວັນທີ 3 - 7 ເມສາ 2023, ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ຮ່ວມກັບຫ້ອງການກະສິກຳເມືອງ ແລະ ແຂວງ ໄດ້ຈັດກອງປະຊຸມຂັ້ນບ້ານກ່ຽວກັບລະບົບລາຍງານການປົກປ້ອງຊຸມຊົນໃນ 7 ບ້ານເປົ້າ ໝາຍຂອງໂຄງການ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 175 ຄົນ, ຍິງ 118 ຄົນ. ໃນກອງ ປະຊຸມແມ່ນໄດ້ມີການສະແດງລະຄອນ ເພື່ອປູກຈິດສຳນຶກກ່ຽວກັບບັນຫາດັ່ງກ່າວ, ການຄັດເລືອກຜູ້ຮັບຜິດຊອບເປີດ-ປິດກ່ອງສະແດງຄຳຄິດເຫັນ ແລະ ການຕິດໂປສເຕີ້ພາຍໃນບ້ານກ່ຽວກັບ ການປົກປ້ອງການລ່ວງລະເມີດທາງເພດ, ການຫາຜົນປະໂຫຍດທາງເພດ ແລະ ການລ່ວງລະເມີດສິດທິເດັກ.



# ເມສາ

## ກອງປະຊຸມ ປະມູນກາເຟປະຈຳປີ 2023 ຂອງກຸ່ມຜະລິດກາເຟພູດອຍ ດາກຈຶງ

ໃນວັນທີ 24 ເມສາ 2023, ໂຄງການ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໄດ້ຈັດກອງປະຊຸມ ປະມູນກາເຟໝາກຂາວ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 30 ທ່ານ, ຍິງ 17 ທ່ານ ແລະ ມີຕົວແທນຈາກຜູ້ປະກອບການເຂົ້າຮ່ວມ 3 ພາກສ່ວນຄື: ບໍລິສັດ ເຜັດສະຫວ່າງ, ບໍລິສັດ ກັງເກ ແລະ ບໍລິສັດ ສີສຸກ. ຜ່ານການປະມູນລາຄາ ເຫັນວ່າ ບໍລິສັດ ສີສຸກ ແມ່ນໃຫ້ລາຄາສູງກວ່າໝູ່ເຖິງ 69,000 ກີບ/ກິໂລ, ແຕ່ມີຄວາມອາດສາມາດຊື້ໄດ້ພຽງຈຳນວນ 5 ໂຕນເທົ່ານັ້ນ. ສະນັ້ນ, ຊາວບ້ານຈຶ່ງຕົກລົງເຫັນດີຂາຍໃຫ້ບໍລິສັດ ສີສຸກ, ສ່ວນກາເຟທີ່ຍັງເຫຼືອອີກ 42 ໂຕນ ແມ່ນຈະຊອກຫາຜູ້ປະກອບການລາຍໃໝ່ມາຊື້ເພີ່ມຕື່ມ.





# ພຶດສະພາ

## ກອງປະຊຸມ ການສ້າງຄວາມເຂັ້ມແຂງໃຫ້ແກ່ ແມ່ຍິງໃນວຽກງານການປູກກາເຟ ແລະ ວຽກການຕະຫຼາດ

ໃນວັນທີ 19 ພຶດສະພາ 2023, ໂຄງການ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍ ຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໄດ້ຈັດຝຶກອົບຮົມ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໃນວຽກງານການຕະຫຼາດ ແລະ ຂັ້ນຕອນການກ້າເບ້ຍກາເຟ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 29 ທ່ານ, ເປັນຍິງ 17 ທ່ານ. ພາຍໃນກອງປະຊຸມ ແມ່ນໄດ້ເວົ້າເຖິງເປົ້າໝາຍ ແລະ ຈຸດປະສົງຂອງໂຄງ ການ, ເປົ້າໝາຍ ແລະ ຈຸດປະສົງຂອງກຸ່ມຜະລິດກາເຟ, ຂໍ້ດີ ແລະ ສິ່ງທ້າທາຍຕໍ່ກັບ ການປູກຕົ້ນກາເຟ, ການສ້າງເຄືອຄ່າຍທາງການຕະຫຼາດ, ການເຈລະຈາຕໍ່ລອງ, ການອອກແບບສິ່ງຫຸ້ມຫໍ່ ແລະ ຮູບແບບວິທີການສົ່ງອອກສູ່ຕະຫຼາດ.





# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງທາງເສດຖະກິດໃຫ້ແກ່ແມ່ຍິງ

ບັນທຶກ ແລະ ແປໂດຍ: ທ່ານ ຈັດຕຸຄິງ ໄພຈິດ

“**ການສ້າງຕັ້ງກຸ່ມແປຮູບກາເຟຂັ້ນບ້ານ ແມ່ນມີຄວາມສຳຄັນຫຼາຍ ຕໍ່ກັບການສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ແກ່ ແມ່ຍິງຊົນເຜົ່າໃນຊຸມຊົນຂອງພວກເຮົາ** ເພາະເປັນການຫຼຸດຜ່ອນການອອກໄປເຮັດວຽກຢູ່ຕ່າງແຂວງ ແລະ ຕ່າງປະເທດ ທີ່ອາດມີຄວາມສ່ຽງຕໍ່ການຖືກລ່ວງລະເມີດທາງເພດ ແລະ ການຖືກເອົາປຽບທາງດ້ານແຮງງານ.”

**ທ່ານ ນາງ ເພັດຫຼ້າ ເລຫວຽດມວງ , ຜູ້ກວດກາກຸ່ມຍ່ອຍກາເຟ**
**ບ້ານ ດາກອາງ, ເມືອງ ດາກຈຶງ**
**ແຂວງ ເຊກອງ**


ທ່ານ ນາງ ເພັດຫຼ້າ ກັບສວນກາເຟຂອງລາວ.


ທ່ານ ນາງ ວິແທນ ແລະ ສວນກ້າເບ້ຍກາເຟຂອງລາວ.

“ການຜະລິດກາເຟໃຫ້ໄດ້ຄຸນະພາບ ຕ້ອງໄດ້ເອົາໃຈໃສ່ຢ່າງພິຖີພິຖັນທຸກຂັ້ນຕອນ ນັບຕັ້ງແຕ່ການກ້າແກ່ນ ຈົນມາເປັນຕົ້ນກາເຟ ແລະ ຈົນກາຍເປັນກາເຟທີ່ສາມາດດື່ມໃນຈອກໄດ້, ແຕ່ສິ່ງທີ່ສຳຄັນທີ່ສຸດຄື **ເພື່ອໃຫ້ກາເຟເປັນທີ່ຍອມຮັບຂອງຜູ້ບໍລິໂພກ ດ້ວຍຄວາມເປັນທຳ ແລະ ຄວາມເພິ່ງພໍໃຈລະຫວ່າງ ຜູ້ຊື້ ແລະ ຜູ້ຂາຍ.** ນີ້ຄືໝາກຫົວໃຈຫຼັກຂອງຕ່ອງໂສ້ການຜະລິດກາເຟທີ່ມີຄຸນະພາບ.”

**ທ່ານ ນາງ ວິແທນ, ສະມາຊິກ ກຸ່ມແປຮູບກາເຟ**
**ບ້ານ ດາກອາງ, ເມືອງ ດາກຈຶງ**
**ແຂວງ ເຊກອງ**

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າ ອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@careint.org

**ທ່ານ ສອນອຸທິດ ພັນທະລັງສີ**
ຫົວໜ້າ ຫ້ອງການ ແຂວງ ເຊກອງ
ເບີໂທ: (+856) 20 5561 9915
ອີເມລ: soneouthid.phanthalangsy@careint.org

**ທ່ານ ນາງ ບົວຄຳ ດວງປັນຍາ**
ຫົວໜ້າ ຝ່າຍສື່ສານ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ
ເບີໂທ: (+856) 20 5560 3139
ອີເມລ: bouakham.douangpanya@careint.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່,
ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ: (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.info@careint.org  www.careint.org.la  Facebook/careint.org.la  CARE International in Lao PDR

care®